

ANNUAL REPORT 2020

PetroTrade

ສາລະບານ

ຄຳຂວັນ/Slogan 1
ວິໄສທັດ/Vision 1
ພາລະກິດ/Mission 1
1. ສານຈາກປະທານສະພາບໍລິຫານ 2
2. ຂໍ້ມູນທົ່ວໄປກ່ຽວກັບບໍລິສັດ 3
3. ປະຫວັດຄວາມເປັນມາ 4
4. ໂຄງຮ່າງການຈັດຕັ້ງ 7
5. ສະມາຊິກສະພາບໍລິຫານ 8
6. ສະພາບການເຄື່ອນໄຫວທຸລະກິດທີ່ພົ້ນເດັ່ນ ໃນປີ 2020 18
7. ການຂາຍຜະລິດຕະພັນ ໃນປີ 2020 20
7.1 ຕາຕະລາງຍອດຂາຍລູກຄ້າໂຄງການ 20
7.2 ຕາຕະລາງຍອດຂາຍລູກຄ້າປໍ້ານ້ຳມັນ 20
7.3 ຕາຕະລາງຍອດຂາຍລູກຄ້ານ້ຳມັນເຕົາ, ຢາງໝາກຕອຍ ແລະ ນ້ຳມັນເຄື່ອງ 22
7.4 ຕາຕະລາງຍອດຂາຍລູກຄ້າທັງໝົດ 23
8. ສູນລວມດ້ານບໍລິການ (Shared Service Centers) 24
9. ການບໍລິຫານສາງນ້ຳມັນ ໃນປີ 2020 25
9.1 ການຮັບເຂົ້າ ແລະ ການຈ່າຍອອກສາງນ້ຳມັນທັງໝົດ 25
9.2 ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນ ແຕ່ລະຊະນິດ 25
10. ວຽກງານບຸກຄະລາກອນ 26
11. ຄວາມຮັບຜິດຊອບຕໍ່ສັງຄົມຂອງບໍລິສັດ 27
12. ການມອບພັນທະອາກອນ ແລະ ອື່ນໆ ເຂົ້າລັດ ປະຈຳປີ 2020 28
13. ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2020 28
14. ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021 28

ຄຳຂວັນ/Slogan

ພລັສ ພະລັງງານເພື່ອຊາດ ພະລັງງານເພື່ອການພັດທະນາ

Plus Energy for The Nation, Energy for The Development

ວິໄສທັດ/Vision


ເປັນບໍລິສັດຊັ້ນນຳ ທາງດ້ານພະລັງງານເຊື້ອໄຟ ທີ່ຄົບວົງຈອນດ້ານຜະລິດຕະພັນປິໂຕຣລ້ຽມ ໃນສປປ ລາວ ແລະ ເຊື່ອມໂຍງການຄ້າໃນລະດັບອາຊຽນ ພາຍໃນ 5 ປີ.

Be a leader of Petroleum business in Lao PDR andlink the commcercial with ASEAN within 5 years.

ພາລະກິດ/Mission

ສ້າງທຸລະກິດພະລັງງານເຊື້ອໄຟຂອງເອກະຊົນລາວທີ່ຄົບວົງຈອນເປັນທີ່ຍອມຮັບແລະເຊື່ອໝັ້ນຂອງສັງຄົມ ສາມາດເຊື່ອມໂຍງການຄ້າໃນ

Create Lao Private sector's Petroleum business fully integration with accpepted and confidence for the end users, linked commercial in the region, create and sharing profitibilities of those involved and to the societies.



1. ສານຈາກປະທານສະພາບໍລິຫານ

ສະບາຍດີບັນດາທ່ານ,

ໃນຕະຫຼອດໄລຍະຂອງປີ 2020 ສະພາບໂດຍລວມລາຄານ້ຳມັນດິບທົ່ວໂລກຕ່ຳຖືບຕົວສູງຂຶ້ນທັນທີ ຫຼັງຈາກ ຊາອຸດີອາຣາເບຍ ປະກາດຕັດສິນໃຈຫຼຸດກຳລັງການຜະລິດນ້ຳມັນລົງ ຈົນເຮັດໃຫ້ລາຄານ້ຳມັນດິບສູງຂຶ້ນຈຸດສູງສຸດໃນຮອບ 11 ເດືອນ ເຊິ່ງສວນກະແສກັບນັກວິເຄາະທີ່ລະບຸວ່າ ການແຜ່ລະບາດຂອງເຊື້ອໄວຣັດ ໂຄວິດ-19 ຈະເຮັດໃຫ້ສະພາບລາຄານ້ຳມັນຕ່ຳລົງ ພ້ອມໆກັບຄວາມຕ້ອງການນຳໃຊ້ນ້ຳມັນເຊື້ອໄຟທີ່ຫຼຸດລົງຢ່າງເປັນປະຫວັດການໃນປີທີ່ຜ່ານມາ ສິ່ງຜົນກະທົບໃຫ້ບັນດາໂຮງກັ່ນໃນພູມມິພາກອາເມລິກາເໜືອ ແລະ ອາຊີ, ຫຼາຍລາຍຕ້ອງໄດ້ປິດໂຕລົງ ຫຼື ປັບຫຼຸດກຳລັງການຜະລິດລົງຢ່າງຫຼວງຫຼາຍເຊັ່ນ ໂຮງກັ່ນຫຼາຍແຫ່ງໃນຂົງເຂດອາຊີ-ປາຊີຟິກ ເຊິ່ງສ້າງຜົນກະທົບຢ່າງໜັກຕໍ່ກັບສະພາບການນຳເຂົ້ານ້ຳມັນຂອງຜູ້ຄ້ານ້ຳມັນໃນປະເທດເຮົາ ທີ່ອາໃສແຕ່ການນຳເຂົ້າຈາກໂຮງກັ່ນປະເທດເພື່ອນບ້ານ.

ພ້ອມນີ້ສະຖານະການ ແລະ ວິກິດການແຜ່ລະບາດຂອງເຊື້ອໄວຣັດ ໂຄວິດ-19 ອັນໄດ້ເປັນສາຍເຫດຫຼັກໃຫ້ບັນດາໂຄງການກໍ່ສ້າງໃຫຍ່ຕ່າງໆ ແລະ ອຸດສາຫະກຳ ທີ່ເປັນເປັນລູກຄ້າຫຼັກຂອງ ປທລ ໄດ້ມີການຢຸດງານ ແລະ ຊະລໍ ກຳລັງການຜະລິດລົງໃນຊ່ວງ 6 ເດືອນຕົ້ນປີ ເຮັດໃຫ້ຕົວເລກແຜນການຂາຍໄດ້ຫຼຸດລົງຈາກແຜນການທີ່ຄາດໄວ້ ໃນນີ້ລວມເຖິງສະຖານີບໍລິການນ້ຳມັນຍອດຂາຍກໍ່ໄດ້ຫຼຸດລົງອັນເນື່ອງຈາກການລ໋ອກດາວ (Lockdown) ພາຍຫຼັງທີ່ 6 ເດືອນທ້າຍປີ ທາງການໄດ້ມີການຜ່ອນຜັນການ Lockdown ເຮັດໃຫ້ສາມາດດຶງຍອດຂາຍກັບມາຄືນໄດ້ເຊັ່ນ: ໂຄງການທາງດ່ວນ ວຽງຈັນ-ວັງວຽງ, ພູເບ້ຍມາຍນິ້ງ, ໂຄງການກໍ່ສ້າງເຂື່ອນໄຟຟ້າ ແລະ ລູກຄ້າປະເພດອື່ນໆ ລວມເຖິງສະຖານີບໍລິການນ້ຳມັນ ແຕ່ວ່າກໍ່ບໍ່ໄດ້ເຕັມທີຕາມແຜນການຂາຍທີ່ໄດ້ວາງໄວ້ເຊິ່ງສະແດງອອກໃນບົດລາຍງານທາງດ້ານການເງິນສົກປີ 2020.

ໃນສົກປີ 2021 ສະພາບນ້ຳມັນໂລກຕ້ອງໄດ້ຈັບຕາເບິ່ງເລື່ອງລາຄານ້ຳມັນດິບທີ່ກຳລັງຖີບໂຕສູງຂຶ້ນຍ້ອນກຸ່ມໂອເປັກ ແລະ ອາເມລິກາ ໄດ້ຫຼຸດກຳລັງການຜະລິດລົງ ໂດຍໃນລາຍງານໄຕມາດ 1/2021 ລາຄານ້ຳມັນດິບຂອງ West Texas ເຄື່ອນໄຫວໃນລະດັບ 57-62 ໂດລາຕໍ່ບາເຣລ ສ່ວນລາຄານ້ຳມັນດິບຂອງ Brent ໜັ້ງຕີງໃນລະດັບ 60-65 ໂດລາຕໍ່ບາເຣລ ໂດຍມີແນວໂນ້ມຄົງຕົວ. ນອກນີ້ການຜະລິດນ້ຳມັນດິບຍັງຄົງມີແນວໂນ້ມປັບຫຼຸດລົງອັນເນື່ອງຈາກຄວາມບໍ່ແນ່ນອນຂອງການຟື້ນຕົວຂອງການນຳໃຊ້ນ້ຳມັນ ແລະ ກຸ່ມໂອເປັກ ພ້ອມດ້ວຍພັນທະມິດ.

ຕາມຕົວເລກສະຖິຕິຂອງ ສຳນັກງານພະລັງງານສາກົນ EIA (U.S. Energy Information Administration) ຄາດການໄວ້ວ່າ ຄວາມຕ້ອງການນຳໃຊ້ນ້ຳມັນໃນປີ 2021 ຈະເພີ່ມຂຶ້ນເລັກໜ້ອຍ ແຕ່ຈະຊ້າກວ່າທີ່ຄາດການໄວ້ຫຼາຍ ສະເລ່ຍທີ 5.7 ລ້ານບາເຣລ ຕໍ່ມື້ ໂດຍໃຫ້ເຫດຜົນຂອງການ Lockdown ກັກກັນການແຜ່ລະບາດຂອງເຊື້ອໄວຣັດໂຄວິດ-19 ທົ່ວໂລກທີ່ຍັງສືບຕໍ່ຫຼຸດລົງຈາກຕົວເລກປີ 2019 ເຖິງ 80% ໂດຍສອດຄ່ອງກັບຂໍ້ມູນຂອງ S&P Platts ທີ່ຊີ້ໄປແນວທາງດຽວກັນ ພ້ອມໆກັບການຜະຍາກອນເສດຖະກິດຂອງຫຼາຍປະເທດທັງໃນກຸ່ມປະເທດທີ່ພັດທະນາແລ້ວ ແລະ ກຳລັງພັດທະນາເຂົ້າສູ່ພາວະຖົດຖອຍ ໂດຍກອງທຶນລະຫວ່າງປະເທດ (IMF) ໄດ້ລາຍງານເສດຖະກິດໂລກປີ 2020 ຫົດຕົວລົງ 4,4 ສ່ວນຮ້ອຍ (ບົດລາຍງານເດືອນຕຸລາ 2020) ເຊິ່ງຕ່ຳກວ່າໃນຊ່ວງເສດຖະກິດຕົກຕ່ຳຄັ້ງໃຫຍ່ທົ່ວໂລກ (The Great Depression) ໃນປີ 1930 ທີ່ເສດຖະກິດໂລກຫົດຕົວ 4,3 ສ່ວນຮ້ອຍ ໂດຍເສດຖະກິດທີ່ອ່ອນແອໄດ້ສິ່ງຜົນກະທົບໂດຍກົງຕໍ່ຄວາມຕ້ອງການນຳໃຊ້ນ້ຳມັນທົ່ວໂລກ ເຊິ່ງກົງກັນຂ້າມກັບອຸປະສົງຂອງການຜະລິດນ້ຳມັນເຊື້ອໄຟທີ່ໜ້ອຍລົງ ແຕ່ລາຄາຕໍ່ລິດຈະແພງຂຶ້ນ.

ປທລ ເປັນໜຶ່ງໃນ 11 ບໍລິສັດທີ່ໄດ້ຮັບໃບອະນຸຍາດໃນການນຳເຂົ້ານ້ຳມັນເຊື້ອໄຟເພື່ອສະໜອງແກ່ສັງຄົມ ແລະ ລູກຄ້າຕ້ອງໄດ້ປັບປ່ຽນແຜນຍຸດທະສາດໃນການຂາຍໂດຍປີ 2021 ນີ້ຈະເພີ່ມການຂະຫຍາຍສະຖານີບໍລິການ

ໃໝ່ໃຫ້ໄດ້ 10 ແຫ່ງ ຊອກຫາລູກຄ້າປະເພດອົງກອນ (B2B) ໃຫ້ຫຼາຍຂຶ້ນ ພ້ອມທັງຜັດທະນາການໃຫ້ບໍລິການປະເພດນ້ຳມັນຫຼໍ່ລື່ນ, ເຄມີພັນ ແລະ ກິດຈະການປັ່ນອ້ອມອື່ນໆ (None-Oil) ໃນສະຖານີບໍລິການນ້ຳມັນໃຫ້ກາຍເປັນຕົ້ນແບບການບໍລິການຄົບວົງຈອນໃນອະນາຄົດ ໄປພ້ອມໆກັບການເປັນສ່ວນໜຶ່ງຂອງການຊ່ວຍສະໜັບສະໜຸນການເຕີບໂຕຂອງຂັບເຄື່ອນເສດຖະກິດຂອງປະເທດ.

2. ຂໍ້ມູນທົ່ວໄປກ່ຽວກັບບໍລິສັດ

ສັນຍາລັກ	:	PTL ຫຼື ປທລ ຫຼື PetroTrade
ສຳນັກງານໃຫ່ຍ	:	ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ໃບທະບຽນວິສາຫະກິດ	:	ສະບັບເລກທີ 508/ຈທວ, ລົງວັນທີ 05 ທັນວາ 2014
ເລກປະຈຳຕົວຜູ້ເສຍອາກອນ	:	722101761-9-00
ທຶນຈົດທະບຽນ	:	470,000,000,000 ກີບ
ຈຳນວນຮຸ້ນທັງໝົດ	:	235,000,000 ຮຸ້ນ
ເວັບໄຊ້	:	www.petrotradelaos.com
ໂທລະສັບ	:	(856) 21 264834-5
ໂທລະສານ	:	(856) 21 264836





3. ປະຫວັດຄວາມເປັນມາ



ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (Petroleum Trading Lao PublicCompany) ຫຼື ທີ່ຮູ້ຈັກກັນໃນນາມ ປີໂຕຣເທຣດ ສ້າງຕັ້ງຂຶ້ນໂດຍ ທ່ານ ຈັນທອນ ສິດທິໄຊ ແລະ ພັນລະຍາຄືທ່ານ ນາງ ສະຫວັນທອງ ຝົງສະຫວັນ ເຊິ່ງທັງສອງທ່ານລ້ວນແຕ່ເປັນນັກທຸລະກິດທີ່ມີຊື່ສຽງໃນ ສປປ ລາວແລະ ມີປະສົບການໃນການປະກອບທຸລະກິດທີ່ຫຼາກຫຼາຍເປັນຕົ້ນແມ່ນທຸລະກິດນຳເຂົ້າ ແລະ ສົ່ງອອກສິນຄ້າຫຼາຍປະເພດໃນ ສປປ ລາວ.

ທີ່ຜ່ານມາ ທັງສອງທ່ານໄດ້ມີໂອກາດເດີນທາງເພື່ອສຳຫຼວດພື້ນທີ່ໃນຕົວເມືອງຕ່າງໆທັງໃນເຂດຊຸມຊົນ ແລະ ເຂດຊົນນະບົດຫ່າງໄກສອກຫຼີກເກືອບທຸກພື້ນທີ່ໃນ ສປປ ລາວ ເຊິ່ງທ່ານໄດ້ເບິ່ງເຫັນຄວາມຫຍຸ້ງຍາກໃນການເຂົ້າເຖິງແຫຼ່ງພະລັງງານ ຫຼື ນ້ຳມັນໂດຍສະເພາະໃນເຂດພື້ນທີ່ຫ່າງໄກສອກຫຼີກ ແລະ ເຫັນວ່ານ້ຳມັນທີ່ຂາຍໃນເຂດດັ່ງກ່າວແມ່ນມີລາຄາແພງເກີນກວ່າລາຄາປົກກະຕິທີ່ລັດຖະບານກຳນົດ. ດ້ວຍເຫັນໄດ້ເຖິງຄວາມຕ້ອງການໃນການຊົມໃຊ້ນ້ຳມັນ ປະກອບກັບແນວໂນ້ມການພັດທະນາເສດຖະກິດຈາກພາກລັດຖະບານ ໂດຍຖືເອົານ້ຳມັນເຊື້ອເພີງເປັນຊັບພະຍາກອນພື້ນຖານທີ່ສຳຄັນໃນການປະກອບສ່ວນໃນການພັດທະນາເສດຖະກິດຂອງປະເທດ. ສະນັ້ນ, ທ່ານ ຈັນທອນ ຈຶ່ງມີແນວຄວາມຄິດໃນການທີ່ຈະສ້າງສະຖານີບໍລິການນ້ຳມັນທີ່ມີຄຸນນະພາບ ແລະ ລາຄາຍຸຕິທຳໃຫ້ແກ່ປະຊາຊົນໃນຂົງເຂດຫ່າງໄກ ແລະ ກະຈາຍທົ່ວ ສປປ ລາວ, ດ້ວຍເຫດຜົນທີ່ກ່າວມາຂ້າງເທິງນັ້ນ ຈຶ່ງເປັນຈຸດເລີ່ມຕົ້ນຂອງການສ້າງຕັ້ງບໍລິສັດຂຶ້ນໃນວັນທີ 6 ກຸມພາ 2008 ດ້ວຍທຶນຈົດທະບຽນເບື້ອງຕົ້ນ 28.80 ຕື້ກີບ ເພື່ອໃຫ້ບໍລິການນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນຜ່ານທາງສະຖານີບໍລິການນ້ຳມັນ, ໂຄງການກໍ່ສ້າງຕ່າງໆລວມໄປເຖິງໂຄງການກໍ່ສ້າງພື້ນຖານໂຄງລ່າງ ໂດຍມີສຳນັກງານໃຫຍ່ຕັ້ງຢູ່ບ້ານ ສຸນັນທາ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ.

ບໍລິສັດໄດ້ນຳເຂົ້ານ້ຳມັນເຊື້ອໄຟຈາກໂຮງກັ່ນນ້ຳມັນທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບໃນດ້ານຄຸນນະພາບໃນລະດັບສາກົນ ໂດຍນຳເຂົ້ານ້ຳມັນຈາກຜູ້ຜະລິດໃນປະເທດໄທ ເຊິ່ງປະກອບດ້ວຍ Chevron (Thailand) Limited (Chevron), ESSO (Thailand) Public Company Limited (ESSO), IRPC Public Company Limited(IRPC) ແລະ The Shell Company of Thailand Limited (Shell).


ປີ		ສະຫຼຸບຫຍໍ້ເຫດການທີ່ພົ້ນເດັ່ນ
ປີ 2008	:	➢ ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ຈຳກັດ ສ້າງຕັ້ງຂຶ້ນດ້ວຍທຶນຈົດທະບຽນ 28.80 ຕື້ກີບ ໂດຍທ່ານ ຈັນທອນ ສິດທິໄຊ ແລະ ທ່ານ ນາງ ສະຫວັນທອງ ຜົງສະຫວັນ ຖືຮຸ້ນໃນສັດສ່ວນ 75 ສ່ວນຮ້ອຍ ແລະ 25 ສ່ວນຮ້ອຍຕາມລຳດັບ ໂດຍມີວັດຖຸປະສົງຫຼັກຄືການນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນເຊື້ອໄຟຜ່ານສະຖານີບໍລິການນ້ຳມັນໃນ ສປປ ລາວ.
ປີ 2009	:	➢ ສ້າງສະຖານີບໍລິການນ້ຳມັນທີ່ໄດ້ມາດຕະຖານແຫ່ງທຳອິດຂຶ້ນທີ່ ໂພນທັນຊື່ວ່າ ປ໊ຳນ້ຳມັນ ພລັສ 1 (Plus 1). ➢ ເປີດນຳໃຊ້ສາງນ້ຳມັນແຫ່ງທຳອິດ ທີ່ແຂວງສະຫວັນນະເຂດ ບໍລິມາດບັນຈຸ 700,000 ລິດ.
ປີ 2010	:	➢ ໄດ້ຮັບການຮັບຮອງຄຸນະພາບມາດຕະຖານຈາກໜ່ວຍງານUKASໃນ 3 ດ້ານຄື: ISO 9001:2008 Quality Management System, ISO 14001:2004Environmental Management System, OHSAS 18001:2007Occupational Health and Safety Management Systems. ➢ ໄດ້ມີການເປີດໃຊ້ສາງນ້ຳມັນທີ່ວຽງຈັນ ບໍລິມາດບັນຈຸ 1,120,000 ລິດ ແລະ ສາງນ້ຳມັນ ເມືອງເງິນ , ແຂວງ ໄຊຍະບູລີ ບໍລິມາດບັນຈຸ 700,000 ລິດ.
ປີ 2011	:	➢ ບໍລິສັດໄດ້ມີການເພີ່ມທຶນຈົດທະບຽນເປັນ 75.60 ຕື້ກີບ ເພື່ອຮອງຮັບການເຕີບໂຕ ແລະ ການລົງທຶນໃນການຂະຫຍາຍສະຖານີບໍລິການນ້ຳມັນໃຫ້ຄອບຄຸມທຸກພື້ນທີ່ຂອງ ສປປ ລາວ. ➢ ມີການເປີດສະຖານີບໍລິການນ້ຳມັນໃນຮູບແບບ ພລັສ ໂກລ (GLD) ເປັນແຫ່ງທຳອິດຂຶ້ນທີ່ ນະຄອນຫຼວງວຽງຈັນ. ➢ ໄດ້ມີການເປີດໃຊ້ສາງນ້ຳມັນທີ່ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ ບໍລິມາດບັນຈຸ 350,000 ລິດ. ➢ ມີສ່ວນແບ່ງທາງການຕະຫຼາດເປັນອັນດັບ 2 ທາງດ້ານທຸລະກິດເຊື້ອໄຟໃນ ສປປ ລາວ.
ປີ 2012	:	➢ ບໍລິສັດມີການເປີດສະຖານີບໍລິການນ້ຳມັນໃນຮູບແບບ ພລັສ ແພ໊ລດຕິນຳ (PTN) ເປັນສະຖານນີບໍລິການນ້ຳມັນທຳອິດຂຶ້ນທີ່ນະຄອນຫຼວງວຽງຈັນ ແລະ ໃສ່ຊື່ວ່າ ພລັສ ສະຖານີບໍລິການນ້ຳມັນ ດອນກອຍທີ່ບ້ານ ດອນກອຍ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ➢ ສາມາດຮັກສາສ່ວນແບ່ງທາງການຕະຫຼາດອັນດັບ 2 ທາງດ້ານທຸລະກິດເຊື້ອໄຟໃນສປປ ລາວ. ➢ ນຳໃຊ້ເຕັກໂນໂລຊີ ແລະ ລະບົບໄອທີທີ່ທັນສະໄໝເຂົ້າໃນການພັດທະນາ, ຄຸ້ມຄອງບໍລິຫານວຽກງານຂາຍຜ່ານເຄື່ອງຮູດບັດ (Electronic Data Capture: EDC) ແລະ ການເກັບກຳຂໍ້ມູນຈາກສູນກາງໄປຫາບັນດາສາຂາໃນຂອບເຂດທົ່ວປະເທດດ້ວຍການສ້າງຊອບແວລະບົບບໍລິຫານຂໍ້ມູນແບບລວມສູນ ຫຼື ERP System. ➢ ມີການລົງທຶນສ້າງລະບົບການບໍລິຫານການຂາຍນ້ຳມັນຜ່ານບັດອີເລັກໂທຣນິກ ຫຼື ບັດເຕີມນ້ຳມັນແທນເງິນສົດ (Fleet Card) ເປັນຜູ້ທຳອິດໃນ ສປປ ລາວ ເຊິ່ງເປັນຜູ້ລິເລີ່ມນຳເອົາເຕັກໂນໂລຊີໃນການບໍລິຫານ ແລະ ຄວບຄຸມຕົ້ນທຶນຄ່າໃຊ້ຈ່າຍໃນການບໍລິຫານຂອງຫ້ວໜ່ວຍທຸລະກິດ ລວມເຖິງ

		ຍັງເປັນບັດທີ່ສາມາດໃຊ້ແທນເງິນສົດໃນການຊຳລະຄ່ານ້ຳມັນໃຫ້ຜູ້ມາໃຊ້ບໍລິການໃນສະຖານີບໍລິການນ້ຳມັນຂອງບໍລິສັດ.
ປີ 2013	:	➢ ບໍລິສັດເພີ່ມທຶນຈົດທະບຽນເປັນ 350.00 ຕື້ກີບ ເພື່ອຮອງຮັບການເຕີບໂຕຂອງບໍລິສັດ ແລະ ການຂະຫຍາຍການລົງທຶນເພື່ອເປັນຜູ້ໃຫ້ບໍລິການໃນອັນດັບຕົ້ນຂອງ ສປປ ລາວ ແລະ ເພື່ອຮອງຮັບການເຕີບໂຕຂອງຄວາມຕ້ອງການນ້ຳມັນໃນ ສປປ ລາວ ແລະ ການເປີດປະຊາຄົມເສດຖະກິດອາຊຽນ (ASEAN Economic Community: AEC). ➢ ໄດ້ຮັບການສືບຕໍ່ຮັບຮອງຄຸນະພາບມາດຕະຖານຈາກໜ່ວຍງານ UKAS ໃນທັງ 3 ດ້ານຄື: ISO 9001:2008, ISO 14001:2004, OHSAS 18001:2007. ➢ ໄດ້ມີການປັບປຸງໂຄງສ້າງບໍລິສັດ ແລະ ບໍລິສັດທີ່ກ່ຽວພັນໃຫ້ຊັດເຈນ ເພື່ອຮອງຮັບການເຕີບໂຕໃນໄລຍະຍາວ. ➢ ຍັງຄົງຮັກສາສ່ວນແບ່ງການຕະຫຼາດເປັນອັນດັບ 2 ຂອງຜູ້ຈຳໜ່າຍນ້ຳມັນເຊື້ອໄຟໃນ ສປປ ລາວ.
ປີ 2014	:	➢ ບໍລິສັດໄດ້ເຂົ້າເປັນສະມາຊິກ ສະມາຄົມ ນ້ຳມັນເຊື້ອໄຟ ແລະ ອາຍແກັດລາວທີ່ຂຶ້ນກັບສະພາການຄ້າ ແລະ ອຸດສາຫະກຳລາວ. ➢ ອີງຕາມກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2014 ໃນວັນທີ 18 ມິຖຸນາ 2014 ມີມະຕິຕົກລົງທີ່ສຳຄັນ ດັ່ງນີ້: – ຫຼຸດມູນຄ່າທີ່ກຳນົດໄວ້ຕໍ່ຮຸ້ນຈາກເດີມ 350,000,000 ກີບ ເປັນ 2,000 ກີບຕໍ່ຮຸ້ນ ສິ່ງຜົນໃຫ້ຈຳນວນຮຸ້ນຂອງບໍລິສັດເພີ່ມຂຶ້ນຈາກ 1,000 ຮຸ້ນ ເປັນ 175,000,000 ຮຸ້ນ. – ໄດ້ມີການກະຈາຍຮຸ້ນຈາກຜູ້ຖືຮຸ້ນເດີມ 2 ຄົນ ມາເປັນ 9 ຄົນ ເພື່ອຮອງຮັບການສ້າງຕັ້ງ ແລະ ປ່ຽນສະຖານະພາບເປັນບໍລິສັດມະຫາຊົນ. ➢ ອີງຕາມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2014 ໃນວັນທີ 9 ຕຸລາ 2014 ມີມະຕິຕົກລົງທີ່ສຳຄັນດັ່ງນີ້: – ອະນຸມັດການເພີ່ມທຶນຈົດທະບຽນເປັນ 470.00ຕື້ກີບ ໂດຍການອອກຮຸ້ນສາມັນເພີ່ມທຶນຈຳນວນ 60,000,000 ຮຸ້ນ ມູນຄ່າກຳນົດ 2,000 ກີບຕໍ່ຮຸ້ນ ເພື່ອຮອງຮັບການສະເໜີຂາຍຮຸ້ນແກ່ມວນຊົນເປັນຄັ້ງທຳອິດ (IPO). – ສ້າງຕັ້ງບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການ ໃນວັນທີ 9 ທັນວາ 2014.



4. ໂຄງຮ່າງການຈັດຕັ້ງ





5. ສະມາຊິກສະພາບໍລິຫານ



ທ່ານ ຈັນທອນ ສິດທິໄຊ

ປະທານສະພາບໍລິຫານ


ຂໍ້ມູນສ່ວນຕົວ	ວັນເດືອນປີເກີດ: 27 ກໍລະກົດ 1977 ອາຍຸ: 43 ປີ ເຊື້ອຊາດ: ລາວ ບ້ານເກີດ: ບ້ານສຸນັນທາ, ເມືອງໄກສອນພົມວິຫານ, ແຂວງສະຫວັນນະເຂດ ບ່ອນເຮັດວຽກ: ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
ປະຫວັດການສຶກສາ ແລະ ຝຶກອົບຮົມ	ປະລິນຍາຕີ: ສາຂາບໍລິຫານທຸລະກິດ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ, ສປປ ລາວ
ປະຫວັດການເຮັດວຽກ	- ປີ 2001 – 2007: ບໍລິສັດພົງສະຫວັນໄມ້ອຸດສະຫະກຳໄມ້, ຜູ້ອຳນວຍການ; - ປີ 2001 – 2007: ບໍລິສັດ ສິດທິອິນເຕີເທຣດດິ້ງ ຂາອອກ-ຂາເຂົ້າ ຈຳກັດ, ຜູ້ອຳນວຍການ; - ປີ 2001 - ປະຈຸບັນ: ບໍລິສັດ ຂວັນໃຈການຄ້າ ຂາອອກ-ຂາເຂົ້າ ຈຳກັດ, ຜູ້ອຳນວຍການໃຫຍ່; - ປີ 2008 - ປະຈຸບັນ: ບໍລິສັດປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ, ຜູ້ອຳນວຍການໃຫຍ່; - ປີ 2010 - ປະຈຸບັນ: ບໍລິສັດ ສຸດາພອນການຄ້າ ຂາອອກ-ຂາເຂົ້າ ຈຳກັດ, ຜູ້ອຳນວຍການໃຫຍ່; - ປີ 2010 - ປະຈຸບັນ: ບໍລິສັດ ແວວເທັກລາວ ຈຳກັດ, ຜູ້ອຳນວຍການໃຫຍ່; - ປີ 2010 - ປະຈຸບັນ: ບໍລິສັດ ສິດທິໂລຈິດສຕິກລາວ ຈຳກັດ, ຜູ້ອຳນວຍການໃຫຍ່. - ປີ 2012 - ປະຈຸບັນ: ບໍລິສັດ ລາວເຄຣິ່ມາດ ຈຳກັດ, ຜູ້ອຳນວຍການໃຫຍ່.



ທ່ານ ນາງ ສະຫວັນທອງ ພົງສະຫວັນ

ຮອງປະທານສະພາບໍລິຫານ

ຂໍ້ມູນສ່ວນຕົວ	ວັນເດືອນປີເກີດ: 19 ກຸມພາ 1980 ອາຍຸ: 41 ປີ ເຊື້ອຊາດ: ລາວ ບ້ານເກີດ: ບ້ານສຸນັນທາ, ເມືອງໄກສອນພົມວິຫານ, ແຂວງສະຫວັນນະເຂດ ບ່ອນເຮັດວຽກ: ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
ປະຫວັດການສຶກສາ ແລະ ຝຶກອົບຮົມ	ປະລິນຍາຕີ: ສາຂາບໍລິຫານທຸລະກິດ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ, ສປປ ລາວ
ປະຫວັດການເຮັດວຽກ	- ປີ 2001 – 2007: ບໍລິສັດ ພົງສະຫວັນໄມ້ອຸດສະຫະກຳໄມ້, ຜູ້ອຳນວຍການ ການເງິນ/ບັນຊີ; - ປີ 2001 – 2007: ບໍລິສັດ ສິດທິອິນເຕີເທຣດດິ້ງ ຂາອອກ - ຂາເຂົ້າ ຈຳກັດ , ປະທານ ແລະ ຮຸ້ນສ່ວນ; - ປີ 2001 - ປະຈຸບັນ: ບໍລິສັດ ຂວັນໃຈການຄ້າ ຂາອອກ-ຂາເຂົ້າ ຈຳກັດ, ຜູ້ອຳນວຍການໃຫຍ່; - ປີ 2008 - ປະຈຸບັນ: ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ, ຕຳແໜ່ງ ຮອງຜູ້ອຳນວຍການໃຫຍ່; - ປີ 2010 - ປະຈຸບັນ: ບໍລິສັດ ສຸດາ ພອນການຄ້າ ຂາອອກ - ຂາເຂົ້າ ຈຳກັດ, ຕຳແໜ່ງ ປະທານ ແລະ ຮຸ້ນສ່ວນ; - ປີ 2010 - ປະຈຸບັນ: ບໍລິສັດ ແວວເທັກລາວ ຈຳກັດ, ປະທານ ແລະ ຮຸ້ນສ່ວນ; - ປີ 2010 - ປະຈຸບັນ: ບໍລິສັດ ສິດທິໂລຈິດສຕິກລາວ ຈຳກັດ, ປະທານ ແລະ ຮຸ້ນສ່ວນ; - ປີ 2012 - ປະຈຸບັນ: ບໍລິສັດ ລາວເຄຣີ່ມາດ ຈຳກັດ, ປະທານ ແລະ ຮຸ້ນສ່ວນ.



ທ່ານ ນາງ ຈັນທະຄອມ ເມກສະຫວັນ

ຮອງປະທານສະພາບໍລິຫານ

ຜູ້ອຳນວຍການໃຫ່ຍຝ່າຍບັນຊີ-ການເງິນ

ຂໍ້ມູນສ່ວນຕົວ	ວັນເດືອນປີເກີດ: 26 ສິງຫາ 1965 ອາຍຸ: 55 ປີ ເຊື້ອຊາດ: ລາວ ບ້ານເກີດ: ບ້ານ ເມືອງວາທ່າ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ ບ່ອນເຮັດວຽກ: ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
ປະຫວັດການສຶກສາ ແລະ ຝຶກອົບຮົມ	ປະລິນຍາຕີ: ສາຂາບໍລິຫານທຸລະກິດ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ, ສປປ ລາວ; ຫຼັກສູດ: ທີ່ປຶກສາບັນຊີ: ຊຸດທີ 3, ຈົບປີ 1998; ຫຼັກສູດ: ວິຊາຊີບຊ່ຽວຊານບັນຊີ 2016-2019; ຫຼັກສູດ: “ Mini MBA in Retail Management”, 1/1/2013 -1/8/2013, ມະຫາວິທະຍາໄລ ສີປະທຸມ, ປະເທດໄທ; ຝຶກອົບຮົມ: ການທະນາຄານເພື່ອການລົງທຶນຢ່າງມືອາຊີບ ລຸ້ນ 1, ຕະຫຼາດຫຼັກຊັບລາວ, 26/04/2014-01/06/2014; ຝຶກອົບຮົມ: ເອກະສານລາຍງານການເງິນ,ຜັງບັນຊີ ແລະ ລະບົບບັນຊີ ສຳລັບວິສາຫະກິດ, ກົມບັນຊີ, 22-26/06/2020.
ປະຫວັດການເຮັດວຽກ	ປີ 2008 - ປັດຈຸບັນ: ບໍລິສັດ ປີໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ.



ທ່ານ ບຸນຖັນ ຈິດຕະວົງ

ສະມາຊິກສະພາບໍລິຫານ

ຂໍ້ມູນສ່ວນຕົວ	ວັນເດືອນປີເກີດ: 02/06/1959 ອາຍຸ: 61 ປີ ເຊື້ອຊາດ: ລາວ ບ້ານເກີດ: ບ້ານ ຕານປ່ຽວ, ເມືອງ ທຸລະຄົມ, ແຂວງ ວຽງຈັນ ບ່ອນເຮັດວຽກ: ບໍລິສັດ ປີໂຕຣລ້ຽມເທຣດິ້ງລາວ ມະຫາຊົນ
ປະຫວັດການສຶກສາ ແລະ ຝຶກອົບຮົມ	ປະລິນຍາຕີ: ເສດຖະສາດການຄ້າ, ອາດິດ ສະຫະພາບ ໂຊວຽດ
ປະຫວັດການເຮັດວຽກ	ປີ 2008 - ປັດຈຸບັນ: ບໍລິສັດ ປີໂຕຣລ້ຽມ ເທຣດິ້ງລາວ ມະຫາຊົນ.



ທ່ານ ນາງ ດາລີ ພົນເສນາ

ສະມາຊິກສະພາບໍລິຫານອິດສະລະ

ຂໍ້ມູນສ່ວນຕົວ	ວັນເດືອນປີເກີດ: 13 ຕຸລາ 1955 ອາຍຸ: 65 ປີ ເຊື້ອຊາດ: ລາວ ບ້ານເກີດ: ບ້ານ ຫຼວງຂອນ, ເມືອງ ນ້ຳທາ, ແຂວງ ຫຼວງນ້ຳທາ ບ່ອນເຮັດວຽກ: ທະນາຄານ ພົງສະຫວັນ
ປະຫວັດການສຶກສາ ແລະ ຝຶກອົບຮົມ	ຊັ້ນສູງ: ການທະນາຄານ, ຣ່ຳໂມ້ຍ, ສສ ຫວຽດນາມ, ປີ 1971-1974; ຊັ້ນສູງ: ທິດສະດີການເມືອງ ແລະ ການປົກຄອງ, ສະຖາບັນການເມືອງ ແລະ ການປົກຄອງ ປະລິນຍາຕີ: ຄະນະອັກສອນສາດ, ມະຫາວິທະຍາໄລແຫ່ງຊາດລາວ; ປະລິນຍາໂທ: ການບໍລິຫານລັດ (Master of Public Administration), ມະຫາວິທະຍາໄລຊຽງໃໝ່, ປະເທດໄທ, ປີ 2005-2006; ຝຶກອົບຮົມ: ການທະນາຄານ, ທະນາຄານແຫ່ວປະເທດໄທ, ເດືອນ 02-04/1992; ຝຶກອົບຮົມ: ຜູ້ບໍລິຫານທະນາຄານ, ທະນາຄານຝັດທະນາອາຊີ, ເດືອນ 10/1993-04/1994; ຝຶກອົບຮົມ: ຜູ້ບໍລິຫານທະນາຄານ, ທະນາຄານແຫ່ງປະເທດໄທ, ເດືອນ 10/1995; ຝຶກອົບຮົມ: ການຕະຫຼາດ, ກອງທຶນສາກົນ (IMF), Austria, ເດືອນ 03/1996; ຝຶກອົບຮົມ: ການບໍລິຫານທຸລະກິດ, ທະນາຄານແຫ່ງປະເທດໄທ, ເດືອນ 08-12/1995;

	ຝຶກອົບຮົມ: ການຄຸ້ມຄອງເງິນຕາຕ່າງປະເທດ, Austria, ເດືອນ 07/1996; ຝຶກອົບຮົມ: ນະໂຍບາຍເງິນຕາ ກອງທຶນສາກົນ (IMF), ຍີ່ປຸ່ນ, ເດືອນ 10/1996; ຝຶກອົບຮົມ: ການບໍລິຫານທະນາຄານທຸລະກິດ, ສິງກະໂປ, ເດືອນ 09/1997; ຝຶກອົບຮົມ: ພາສາອັງກິດ, ລັດຖະບານນິວຊີແລນ, ປີ1997-1998; ຝຶກອົບຮົມ: ມາດຕະຖານການບັນຊີ, ກອງທຶນສາກົນ (IMF), Austria, ເດືອນ 04/1997 ຝຶກອົບຮົມ: ເສດຖະສາດມະຫາພາ, ກອງທຶນສາກົນ (IMF) ແລະ ອົງການ JCIF, ຍີ່ປຸ່ນ, ເດືອນ 10/1999; ຝຶກອົບຮົມ: ນະໂຍບາຍເງິນຕາ, ທະນາຄານແຫ່ງລັດ ສສ ຫວຽດນາມ, ເດືອນ 12/1999; ຝຶກອົບຮົມ: ເສດຖະສາດມະຫາພາກ, ກອງທຶນສາກົນ (IMF), ສິງກະໂປ, ເດືອນ 05/2001; ຝຶກອົບຮົມ: ເສດຖະສາດມະຫາພາກ, ກອງທຶນສາກົນ (IMF), ຍີ່ປຸ່ນ, ເດືອນ 02/2002; ຝຶກອົບຮົມ: ການຄຸ້ມຄອງເສດຖະກິດ, ທະນາຄານກາງລຸກຊຳບົວ, ລຸກຊຳບວກ, ເດືອນ 03/2003; ຝຶກອົບຮົມ: ມາດຕະຖານການບັນຊີ; ທະນາຄານ ADB, ສສ ຫວຽດນາມ, ເດືອນ 07/2004; ຝຶກອົບຮົມ: ກວດສອບບັນຊີ, ກອງທຶນສາກົນ (IMF), ສິງກະໂປ, ເດືອນ 01/2005; ຝຶກອົບຮົມ: ເສດຖະສາດມະຫາພາກ, ກອງທຶນສາກົນ (IMF), ຍີ່ປຸ່ນ, ເດືອນ 03/2005;

	ຝຶກອົບຮົມ: ນະໂຍບາຍເງິນຕາ, ທະນາຄານກາງ ແລະ JCIF, ສປ ຈີນ, ເດືອນ 08/2007; ຝຶກອົບຮົມ: ຕະຫຼາດຫຼັກຊັບ, ທະນາຄານແຫ່ງລັດ ສສ ຫວຽດນາມ, ເດືອນ 09/2007; ຝຶກອົບຮົມ: ຕະຫຼາດຫຼັກຊັບ ສ. ເກົາຫຼີ, ເດືອນ 09/2007; ຝຶກອົບຮົມ: ຕະຫຼາດຫຼັກຊັບໄທ, ເດືອນ 10/2007; ຝຶກອົບຮົມ: ການຄຸ້ມຄອງເສດຖະກິດ, ທະນາຄານພັດທະນາຈີນ, ສປ ຈີນ, ເດືອນ 11/2008; ຝຶກອົບຮົມ: ນະໂຍບາຍຄຸ້ມຄອງລັດ ທະນາຄານ ADB, ຍີ່ປຸ່ນ, ເດືອນ 04/2009; ຝຶກອົບຮົມ: ວິຊາຊີບທຸລະກິດຫຼັກຊັບ ຕະຫຼາດຫຼັກຊັບແຫ່ງປະເທດໄທ, ເດືອນ 07/2009.
ປະຫວັດການເຮັດວຽກ	- ປີ 1976-1979: ທະນາຄານແຫ່ງ ສປປ ລາວ, ຫົວໜ້າກົມບັນຊີ - ປີ 1980-1983: ທະນາຄານພິເສດ, ນະຄອນຫຼວງ, ຜູ້ອຳນວຍການ - ປີ 1984-1989: ທະນາຄານແຫ່ງ ສປປ ລາວ, ຫົວໜ້າກົມກວດກາ - ປີ 1989-1997: ທະນາຄານແຫ່ງ ສປປ ລາວ, ຫົວໜ້າກົມບໍລິການທະນາຄານ - ປີ 1998-2004: ທະນາຄານແຫ່ງ ສປປ ລາວ, ຫົວໜ້າກົມບັນຊີ - ປີ 2007-2010: ທະນາຄານແຫ່ງ ສປປ ລາວ, ຫົວໜ້າກົມນະໂຍບາຍເງິນຕາ - ປີ 2010-2011: ທະນາຄານແຫ່ງ ສປປ ລາວ, ຜູ້ຊ່ວຍຜູ້ວ່າການ



ທ່ານ ໝູພັນ ມະຫາພົນ

ສະມາຊິກສະພາບໍລິຫານອິດສະລະ

ຂໍ້ມູນສ່ວນຕົວ	ວັນເດືອນປີເກີດ: 11 ຕຸລາ 1950 ອາຍຸ: 70 ປີ ເຊື້ອຊາດ: ລາວ ບ້ານເກີດ: ບ້ານ ດອນເປືອຍ, ເມືອງ ມູນລະປະໂມກ, ແຂວງ ຈຳປາສັກ ບ່ອນເຮັດວຽກ: ພະນັກງານບຳນານ ແລະ ເປັນທີ່ປຶກສາກົດໝາຍ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ປະຫວັດການສຶກສາ ແລະ ຝຶກອົບຮົມ	ປະລິນຍາຕີ: ສາຂາກົດໝາຍ, ສະຖາບັນການປົກຄອງ; ປະລິນຍາໂທ: ສາຂາ ກົດໝາຍ, ເມືອງ Kiev, ອາດີດ ສະຫະພາບ ໂຊວຽດ, ປີ 1978-1984.
ປະຫວັດການເຮັດວຽກ	- ປີ 1975-1978: ກະຊວງ ຍຸຕິທຳ; - ປີ 1984-1987: ກະຊວງ ຍຸຕິທຳ; - ປີ 1987-1993: ປະທານສານປະຊາຊົນ ແຂວງຈຳປາສັກ; - ປີ 1993-2007: ກະຊວງຍຸຕິທຳ ແລະ ປະທານສານປະຊາຊົນ ນະຄອນຫຼວງ ວຽງຈັນ; - ປີ 2007-2013: ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ, ກະຊວງ ຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ.
ປະຫວັດການສິດສອນ	- ປີ 1994: ວິຊາກົດໝາຍ, ຄະນະນິຕິສາດ ແລະ ການປົກຄອງ ວິທະຍາເຂດ ດອນນົກຂຸ້ມ; - ປີ 1995: ວິຊາກົດໝາຍ, ສະຖາບັນການເມືອງ ແລະ ການປົກຄອງ; - ແລະ ສິດສອນວິຊາກົດໝາຍ ທີ່ ສະຖາບັນອື່ນໆ ຈົນເຖິງ ປີ 2016.



ທ່ານ ໂພໄຊ ຈັນທະວົງສາ

ສະມາຊິກສະພາບໍລິຫານອິດສະລະ

ຂໍ້ມູນສ່ວນຕົວ	ວັນເດືອນປີເກີດ: 11 ທັນວາ 1971 ອາຍຸ: 49 ປີ ເຊື້ອຊາດ: ລາວ ບ້ານເກີດ: ບ້ານໂພນຊາຍ, ເມືອງໄກສອນພົມວິຫານ, ແຂວງສະຫວັນນະເຂດ ບ່ອນເຮັດວຽກ: ບໍລິສັດ ຂວັນໃຈ ການຄ້າ ຂາເຂົ້າ-ຂາອອກ ຈຳກັດ
ປະຫວັດການສຶກສາ ແລະ ຝຶກອົບຮົມ	ຊັ້ນສູງ: ການບັນຊີ, ວິທະຍາໄລ ເຕັກນິກປາກປ່າສັກ; ຊັ້ນສູງ: ທິດສະດີການເມືອງ-ການປົກຄອງ, ສະຖາບັນການເມືອງ-ການປົກຄອງ ແຫ່ງ ຊາດ (ທ່າງອນ); ປະລິນຍາຕີ: ການບັນຊີ, ວິທະຍາໄລ ສະຫວັນ ບໍລິຫານທຸລະກິດ, ສະຫວັນ ນະເຂດ; ປະລິນຍາໂທ: ການບັນຊີ, ມະຫາວິທະຍາໄລແຫ່ງຊາດ, ສປປ ລາວ; ປະກາດສະນິຍະບັດ: ນາຍໜ້າຊື້-ຂາຍຫຼັກຊັບ, ຕະຫຼາດຫຼັກຊັບລາວ, ປີ 2014; ປະກາດສະນິຍະບັດ: ທີ່ປຶກສາບັນຊີ (Lao CPA), ຊຸດທີ 2, ປີ 1997; ຝຶກອົບຮົມ: ວິທະຍາກອນ (Certificate of Accomplishment), ຕະຫຼາດຫຼັກ ຊັບແຫ່ງປະເທດໄທ, ເດືອນ 09/2014; ຝຶກອົບຮົມ: ນັກບັນຊີທີ່ໄດ້ຮັບອະນຸຍາດປະເທດອົດສະຕຣາລີ, ລົງເລິກຮຽນວິຊາ ການລາຍງານການເງິນ, ການບັນຊີຄຸ້ມຄອງ, ກົດຈັນຍາບັນ ແລະ ການຄຸ້ມຄອງ ແລະ ຍຸດທະສາດໃນການບໍລິຫານ, CPA Australia, ເດືອນ 07-11/2010;

	ຝຶກອົບຮົມ: ຝຶກອົບຮົມພາສາອັງກິດ 500 ຊົ່ວໂມງ, ສະຖາບັນການຕ່າງປະເທດ, ກະຊວງການຕ່າງປະເທດ, ເດືອນ 07-12/2005; ຝຶກອົບຮົມ: ຝຶກອົບຮົມວຽກງານກວດກາບັນຊີວິສາຫະກິດ, ກົມສ່ວຍສາອາກອນ ສສ ຫວຽດນາມ ແລະ ສປປ ລາວ, ເດືອນ 09/2011; ຝຶກອົບຮົມ: ຝຶກອົບຮົມລະບົບຂໍ້ມູນຂ່າວສານ, ປະເທດໄທ, ເດືອນ 07/2006; ຝຶກອົບຮົມ: ຝຶກອົບຮົມການຈັດຕັ້ງປະຕິບັດມາດຕະ ຖານສາກົນດ້ານການລາຍງານ ການເງິນ IFRSs, ອົງການວິຊາຊີບອິນໂດເນເຊຍ, ເດືອນ 05/2006; ຝຶກອົບຮົມ: ຝຶກອົບຮົມມາດຕະຖານລາວດ້ານການກວດສອບ, ກະຊວງການເງິນ, ເດືອນ 02/2006.
ປະຫວັດການເຮັດວຽກ	- ປີ 1993-1999: ກະຊວງການເງິນ, ພະນັກງານກົມບັນຊີ; - ປີ 2000-2002: ກະຊວງການເງິນ, ຫົວໜ້າພະແນກບັນຊີວິສາຫະກິດ; - ປີ 2003-2005: ກະຊວງການເງິນ, ຮອງຫົວໜ້າພະແນກສ່ວຍສາອາກອນ; - ປີ 2006-2007: ກະຊວງການເງິນ, ຫົວໜ້າພະແນກບັນຊີວະສາຫະກິດ; - ປີ 2007-2012: ກະຊວງການເງິນ, ຮອງຫົວໜ້າກົມບັນຊີ; - ປີ 2012: ກະຊວງການເງິນ, ສະເໜີຮັບນະໂຍບາຍບຳເນັດ; - ປີ 2012-2014: ຜູ້ອຳນວຍການຝ່າຍບັນຊີ-ການເງິນ; - ປີ 2014-2017: ຜູ້ອຳນວຍການຝ່າຍກວດສອບພາຍໃນ; - ປີ 2018-ປັດຈຸບັນ: ຜູ້ອຳນວຍການຝ່າຍບັນຊີ-ການເງິນ.
ປະຫວັດການສຶດສອນ	- ປີ 2014-2015: ບັນຊີອາກອນ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ; - ປີ 2009-2012: ການບັນຊີທົ່ວໄປ (ຫຼັກສູດປະລິນຍາໂທ), ວິທະຍາໄລ ຄອມເຊັນເຕີ້; - ປີ 1998-2012: ບັນຊີທົ່ວໄປລີງເລິກ, ທີ່ປຶກສາບັນຊີລາວ Lao CPA; - ປີ 2009-2011: ບັນຊີທົ່ວໄປລີງເລິກ, ການບັນຊີວິໄຈ, ຄວາມສຳນຶກເບື້ອງຕົ້ນ ກ່ຽວກັບການຄຸ້ມຄອງການເງິນ ແລະ ຄວາມສຳນຶກຕົ້ນຕໍ ດ້ານການກວດສອບ (ອາຈານສອນປະລິນຍາຕີ ແລະ ຊັ້ນສູງ), ວິທະຍາໄລເຕັກນິກປາກປ່າສັກ.

6. ສະພາບການເຄື່ອນໄຫວທຸລະກິດທີ່ພົ້ນເດັ່ນ ໃນປີ 2020

ໃນປີ 2020, ປທລ ໄດ້ເຊັນສັນຍາ ແລະ ການລົງນາມພິທີບົດບັນທຶກຄວາມເຂົ້າໃຈ ຫຼາຍໂຄງການ ແລະ ເຂົ້າຮ່ວມງານທາງດ້ານທຸລະກິດຕ່າງໆ ເພື່ອສືບຕໍ່ພັດທະນາທຸລະກິດ ແລະ ພັດທະນາປະເທດຊາດ ໂດຍສະແດງ ໃຫ້ເຫັນ ດັ່ງລຸ່ມນີ້:

1. ພາຍຫຼັງທີ່ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ສຳລັບການອອກແບບລະອຽດຂອງໂຄງການທາງ ລົດໄຟລາວ - ຫວຽດນາມ ກັບລັດຖະບານລາວໃນວັນທີ 15 ຕຸລາ 2019, ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ(Petrotrade) ໄດ້ສືບຕໍ່ເຮັດວຽກແລະຮ່ວມມືກັບບັນດາຄູ່ຮ່ວມມືເຊັ່ນ: ກຸ່ມລັດວິສາຫະກິດ ພັດທະນາທາງ ລົດໄຟອິນໂດເນເຊຍ (IRDC) ແລະ ລັດວິສາຫະກິດ Transportation Engineering Design Incorporation ຫວຽດນາມ (TEDI) ເພື່ອອອກແບບລະອຽດເພີ່ມເຕີມ ແລະ ສຳເລັດວຽກງານທີ່ລັດຖະບານລາວ ໄດ້ມອບໝາຍໃຫ້. ເພື່ອສືບຕໍ່ພັດທະນາໂຄງການທາງລົດໄຟ ລາວ - ຫວຽດນາມ, Petrotrade ໄດ້ເຊັນສັນຍາກັບ ທີ່ປຶກສາ ບໍລິສັດ ເນ ເຊີແນວ ຄອນຊາວຕິ້ງກຼຸບ ຈຳກັດຜູ້ດຽວ (NCG), ເພື່ອດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ (ESIA) ເພື່ອຮັບປະກັນວ່າໂຄງການດັ່ງກ່າວຖືກພັດທະນາສອດຄ່ອງກັບສິ່ງແວດລ້ອມສາກົນ ແລະ ມາດຕະຖານທາງ ສັງຄົມ. ເພື່ອດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ (ESIA) ເພື່ອຮັບປະກັນວ່າໂຄງການດັ່ງກ່າວ ຖືກພັດທະນາສອດຄ່ອງກັບສິ່ງແວດລ້ອມສາກົນ ແລະ ມາດຕະຖານສັງຄົມ.



2. ພິທີລົງນາມ ບົດບັນທຶກຄວາມເຂົ້າໃຈ (MOU) ວ່າດ້ວຍການຮ່ວມມືພັດທະນາ ແລະ ຄວາມເປັນໄປໄດ້ໃນການລົງທຶນ ສ້າງສາງເກັບນ້ຳມັນ ໃນເຂດໂລຊິດສະຕິກ ນະຄອນຫຼວງວຽງຈັນ ລະຫວ່າງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ແລະ ບໍລິສັດ ມູຫິບບາ ເອັນຈິເນຍລິ້ງ (M) BHD





ໃນການຮ່ວມມືກັນຄັ້ງນີ້ແມ່ນຈະໄດ້ລິເລີ່ມສຶກສາຄວາມເປັນໄປໄດ້ ໃນການລົງທຶນພັດທະນາສ້າງສາງນ້ຳມັນ ໃນເນື້ອທີ່ປະມານ 20 ເຮັກຕາ ເຊິ່ງຈະຢູ່ໃນເຂດ ວຽງຈັນ ໂລຊິດສຕິກ ພາກ ຫຼື ໃນເຂດເສດຖະກິດພິເສດ ເພື່ອຮອງຮັບນ້ຳມັນໄດ້ເຖິງ 150ລ້ານລິດ. ພິທີດັ່ງກ່າວໄດ້ຈັດຂຶ້ນ ທີ່ສຳນັກງານໃຫຍ່ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ.

3. ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ ໄດ້ຈັດພິທີປະກາດການແຕ່ງຕັ້ງ ຄະນະສະພາບໍລິຫານ ແລະ ຄະນະຜູ້ອຳນວຍການ ລັດວິສາຫະກິດ ພັດທະນາທ່າເຮືອ ຫວຸ້ງອ່າງ ລາວ-ຫວຽດນາມ ຂຶ້ນຢ່າງເປັນທາງການ.



ລັດວິສາຫະກິດ ພັດທະນາທ່າເຮືອ ຫວຸ້ງອ່າງ ລາວ-ຫວຽດນາມ ມີໂຄງປະກອບຄືການຮ່ວມ ພັດທະນາລະຫວ່າງ ລັດຖະບານ ແລະ ເອກະຊົນ ສັດສ່ວນການຖືຮຸ້ນ 51% - 49% ກໍຄືກະຊວງການເງິນ ຕາງໜ້າໃຫ້ລັດຖະບານລາວ ຖືຮຸ້ນ 51%, ເອກະຊົນ ຕາງໜ້າໂດຍ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຖືຮຸ້ນ 49% ໂດຍໄລຍະເວລາການຮ່ວມມື 50 ປີ ສາມາດ ສືບຕໍ່ໄດ້ຕາມການ ເຫັນດີຂອງທັງສອງຝ່າຍ.

7. ການຂາຍຜະລິດຕະພັນ ໃນປີ 2020

7.1 ຕາຕະລາງຍອດຂາຍລູກຄ້າໂຄງການ

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2020 ກັບ ຍອດຂາຍຕົວຈິງ

ລູກຄ້າ/Costomer	ແຜນ 2020	ຍອດຂາຍ	ສ່ວນຕ່າງ ຍອດຂາຍ 2020	
	ລິດ	ລິດ	ລິດ	ເປັນ %
B2B	**114,140,000**	**84,575,000**	**-29,565,000**	**-25.90**

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2020 ກັບ ຍອດຂາຍປີ 2019

ລູກຄ້າ/Costomer	ຍອດຂາຍ 2020	ຍອດຂາຍ 2019	ສ່ວນຕ່າງ ຍອດຂາຍ 2019-2020	
	ລິດ	ລິດ	ລິດ	ເປັນ %
B2B	**84,575,000**	**102,357,000**	**-17,782,000**	**-17.37**



7.2 ຕາຕະລາງຍອດຂາຍລູກຄ້າປ້ຳນ້ຳມັນ

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2020 ກັບ ຍອດຂາຍຕົວຈິງ

ລ/ດ	ລູກຄ້າ/Costomer	ແຜນ	ຍອດຂາຍ	ສ່ວນຕ່າງ ແຜນ-ຍອດຂາຍ	
		ລິດ	ລິດ	ລິດ	ເປັນ %
1	ປ້ຳນ້ຳມັນ ພລາຕິນຳ/Platinum	16,113,000	12,991,000	-3,122,000	-19
2	ປ້ຳນ້ຳມັນ ໂກລ/Gold	23,036,000	21,576,000	-1,460,000	-6
3	ປ້ຳນ້ຳມັນມາດຕະຖານ/ Standard	22,553,000	18,443,000	-4,110,000	-18
4	ປ້ຳນ້ຳມັນ ທ້ອງຖິ່ນ ພັດທະນາ/ Thongthin	11,597,000	11,137,000	-460,000	-4
ລວມ/Total		**73,299,000**	**64,147,000**	**-9,152,000**	**-12.49**

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2020 ກັບ ຍອດຂາຍປີ 2019

ລ/ດ	ລູກຄ້າ/Costomer	ຍອດຂາຍ 2020	ຍອດຂາຍ 2019	ສ່ວນຕ່າງ ຍອດຂາຍ 2019-2020	
		ລິດ	ລິດ	ລິດ	ເປັນ %
1	ປ້ຳນ້ຳມັນ ພລາຕິນຳ/Platinum	12,991,000	14,518,000	-1,527,000	-10.52
2	ປ້ຳນ້ຳມັນ ໂກລ/Gold	21,576,000	24,036,000	-2,460,000	-10.23
3	ປ້ຳນ້ຳມັນມາດຕະຖານ/ Standard	18,443,000	17,747,000	+696,000	+3.92
4	ປ້ຳນ້ຳມັນ ທ້ອງຖິ່ນ ພັດທະນາ/ Thongthin	11,137,000	10,675,000	+462,000	+4.33
ລວມ/Total		**64,147,000**	**66,976,000**	**-2,829,000**	**-4.22**

7.3 ຕາຕະລາງຍອດຂາຍລູກຄ້ານ້ຳມັນເຕົາ, ຢາງໝາກຕອຍ ແລະ ນ້ຳມັນເຄື່ອງ

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2020 ກັບ ຍອດຂາຍຕົວຈິງ

ລ/ດ	ລູກຄ້າ/Costomer	ແຜນ 2020	ຍອດຂາຍ 2020	ສ່ວນຕ່າງ ແຜນ-ຍອດຂາຍ 2020	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້ານ້ຳມັນເຕົາ	ຕາມການສັ່ງຊື້ຂອງ ລູກຄ້າ	6,759,375	N/A	N/A
2	ຢາງໝາກຕອຍ	ຕາມການສັ່ງຊື້ຂອງ ລູກຄ້າ	19,003,187	N/A	N/A
3	ນ້ຳມັນເຄື່ອງ	120,000	12,298	-107,702	-89.75
ລວມ/Total		**120,000**	**25,774,860**	N/A	N/A

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2020 ກັບ ຍອດຂາຍປີ 2019

ລ/ດ	ລູກຄ້າ/Costomer	ຍອດຂາຍ 2020	ຍອດຂາຍ 2019	ສ່ວນຕ່າງ ຍອດຂາຍ 2019-2020	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້ານ້ຳມັນເຕົາ	6,759,375	N/A	N/A	N/A
2	ຢາງໝາກຕອຍ	19,003,187	N/A	N/A	N/A
3	ນ້ຳມັນເຄື່ອງ	12,298	10,335	+1,963	+18.99
ລວມ/Total		**25,774,860**	**10,335**	**25,764,525**	N/A





7.4 ຕາຕະລາງຍອດຂາຍລູກຄ້າທັງໝົດ

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2020 ກັບ ຍອດຂາຍປີ 2020

ລ/ດ	ລູກຄ້າ/Costomer	ແຜນ 2020	ຍອດຂາຍ 2020	ສ່ວນຕ່າງ ແຜນ-ຍອດຂາຍ 2020	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້າໂຄງການ/ B2B	114,140,000	84,575,000	-29,565,000	-25.90
2	ລູກຄ້າປັ໊ມນ້ຳມັນ/ Gas Station	73,299,000	64,147,000	-9,152,000	-12.49
3	ລູກຄ້ານ້ຳມັນເຕົ້າ ແລະ ຢາງໝາກຕອຍ	ຕາມການສັ່ງຊື້ ຂອງ ລູກຄ້າ	25,762,562	25,762,562	100
4	ລູກຄ້ານ້ຳມັນເຄື່ອງ/ Lubricant	120,000	12,298	-107,702	-89.75
ລວມ/Total		**187,559,000**	**174,496,860**	**-13,062,140**	**-6.96**

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍ 2020 ກັບ ຍອດຂາຍ 2019

ລ/ດ	ລູກຄ້າ/Costomer	ຍອດຂາຍ 2020	ຍອດຂາຍ 2019	ສ່ວນຕ່າງ ຍອດຂາຍ 2019-2020	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້າໂຄງການ/ B2B	84,575,000	102,357,000	-17,782,000	-17.37
2	ລູກຄ້າປັ໊ມນ້ຳມັນ/ Gas Station	64,147,000	66,976,000	-2,829,000	-4.22
3	ລູກຄ້ານ້ຳມັນເຕົ້າ ແລະ ຢາງໝາກຕອຍ	25,762,562	N/A	N/A	N/A
4	ລູກຄ້ານ້ຳມັນເຄື່ອງ/ Lubricant	12,298	10,335	+1,963	+18.99
ລວມ/Total		**174,496,860**	**169,343,335**	**+20,612,963**	**+40.59**

8. ສູນລວມດ້ານບໍລິການ (Shared Service Centers)

ໃນແຜນການດຳເນີນທຸລະກິດ ປີ 2020, ປທລ ໄດ້ສ້າງສູນລວມດ້ານບໍລິການຂຶ້ນ ເພື່ອຈຸດປະສົງ ດັ່ງລຸ່ມນີ້:

- ເພື່ອຄວາມຄ່ອງຕົວ ແລະ ລວມສູນ;
- ເພື່ອສ້າງລາຍໄດ້ເພີ່ມໃຫ້ ປທລ;
- ເພື່ອໃຫ້ມີການຄວບຄຸມທີ່ດີຂຶ້ນ ແລະ ມີຄວາມໂປ່ງໃສກ່ຽວກັບຄ່າໃຊ້ຈ່າຍຂອງບໍລິສັດໃນເຄືອທັງໝົດ.

ລ/ດ	ລາຍການ	ແຜນ	ປະຕິບັດໄດ້	ເປັນ %
1	ໄອທີ	279,834 ໂດລາສະຫະລັດ	234,735 ໂດລາສະຫະລັດ	84%
2	ບໍລິຫານຫ້ອງການ	260,258 ໂດລາສະຫະລັດ	196,130 ໂດລາສະຫະລັດ	75%
3	ຈັດຊື້	21,240 ໂດລາສະຫະລັດ	20,400 ໂດລາສະຫະລັດ	96%
	Total	**561,332 ໂດລາສະຫະລັດ**	**451,265 ໂດລາສະຫະລັດ**	**82%**



"ພລັສ ພະລັງງານເພື່ອຊາດ ພະລັງງານເພື່ອການພັດທະນາ"

9. ການບໍລິຫານສາງນ້ຳມັນ ໃນປີ 2020

9.1 ການຮັບເຂົ້າ ແລະ ການຈ່າຍອອກສາງນ້ຳມັນທັງໝົດ

ລ/ດ	ລາຍການ	2019	2020	ສ່ວນຕ່າງ 2019-2020	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ການຮັບເຂົ້າສາງທັງໝົດ	169,849,456	147,872,662	21,976,794	12.94
2	ການຈ່າຍອອກສາງທັງໝົດ	168,635,877	147,903,581	20,732,296	12.29
3	ນ້ຳມັນເຄື່ອງ	10,458	11,584	-1,126	-10.77
ລວມ/Total		**338,495,791**	**295,787,827**	**42,707,964**	**14.47**

9.2 ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນ ແຕ່ລະຊະນິດ

- ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນແອດຊັ້ງ 95 ໃນລະຫວ່າງເກັບຮັກສາເທົ່າກັບ -1,250 ລິດ ຂອງ ຍອດຮັບທັ້ງໝົດ 1,069,861 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0.12 ສ່ວນຮ້ອຍ;
- ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນແອດຊັ້ງ 91 ໃນລະຫວ່າງເກັບຮັກສາເທົ່າກັບ -20,389 ລິດ ຂອງ ຍອດຮັບທັ້ງໝົດ 25,552,948 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0.08 ສ່ວນຮ້ອຍ;
- ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນກາຊວນ ໃນລະຫວ່າງເກັບຮັກສາເທົ່າກັບ -10,345 ລິດ ຂອງຍອດ ຮັບທັ້ງໝົດ 121,249,853 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0.01 ສ່ວນຮ້ອຍ.




10. ວຽກງານບຸກຄະລາກອນ

ການດຳເນີນງານດ້ານບຸກຄະລາກອນ ປະຈຳປີ 2020 ຜ່ານມາແມ່ນເນັ້ນໃສ່ການຮັບປະກັນຄວາມພຽງພໍ ຂອງພະນັກງານ, ການສັນຫາບຸກຄະລາກອນທີ່ເໝາະສົມເຂົ້າຕຳແໜ່ງທີ່ຫວ່າງຢ່າງມີປະສິດທິພາບ, ເບິ່ງແຍງສະຫວັດດີ ການຂອງພະນັກງານຕາມກົດລະບຽບພາຍໃນບໍລິສັດ ແລະ ຕາມກົດໝາຍແຮງງານວາງອອກ.

ນອກນີ້ກໍ່ຍັງໄດ້ຈັດໃຫ້ມີການຝຶກອົບຮົມໃນຫົວຂໍ້ຕ່າງໆ ເພື່ອເພີ່ມທັກສະ ແລະ ຄວາມຮັບຮູ້ຂອງພະນັກງານພາຍ ໃນອົງກອນດັ່ງນີ້:

- ການເຜີຍແຜ່ນະໂຍບາຍບໍລິສັດ, ມາດຕະຖານ ISO ແລະ ກົດໝາຍປະຈຳສົກປີ 2020;
- ເຜີຍແຜ່ກົດລະບຽບ ແລະ ນະໂຍບາຍບໍລິສັດ (ສຳລັບພະນັກງານເຂົ້າໃໝ່);
- ເຜີຍແຜ່ລະບຽບຄວາມປອດໄພ ແລະ ສິ່ງແວດລ້ອມ (ສຳລັບພະນັກງານເຂົ້າໃໝ່);
- ຝຶກອົບຮົມການປະເມີນຜົນຜ່ານລະບົບອອນໄລນ໌;
- ການນຳໃຊ້ໂປຣແກຣມ AX ຂັ້ນພື້ນຖານ ແລະ ຂັ້ນຕອນໃນການສັ່ງຊື້;
- ເຜີຍແຜ່ຂອບເຂດສິດອຳນາດໃນການອະນຸມັດເອກະສານພາຍໃນ;

ບໍລິສັດ ປີໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ ມີຈຳນວນພະນັກງານ ປະຈຳປີ 2020 ມີຈຳນວນ ດັ່ງນີ້:



ນອກນີ້ໃນບໍລິສັດຍັງໄດ້ຮັບເອົານັກສຶກສາຈາກສະຖາບັນການສຶກສາຕ່າງໆ ເຂົ້າມາຝຶກງານໃນຝ່າຍຕ່າງໆຂອງບໍລິສັດດັ່ງນີ້:

ລ/ດ	ລາຍລະອຽດ	ໄລຍະ	ຈຳນວນຄົນ	ສະຖານທີ
1	ວິທະຍາໄລເຕັກນິກດົງຄຳຊ້າງ, ສາຂາວິຊາ: ກະສິກຳ-ປ່າໄມ້, ລະດັບຊັ້ນສູງ	4 ເດືອນ	4	ສຳນັກງານໃຫຍ່
2	ມະຫາວິທະຍາໄລແຫ່ງຊາດ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ	1,5 ເດືອນ	4	ສຳນັກງານໃຫຍ່
3	Royal Melbourne Institute of Technology (RMIT)	4 ເດືອນ	1	ສຳນັກງານໃຫຍ່
		ລວມ	**9**	

11. ຄວາມຮັບຜິດຊອບຕໍ່ສັງຄົມຂອງບໍລິສັດ

ລ/ດ	ລາຍລະອຽດ	ຈຳນວນ (ກີບ)
1	ໂຄງການປູກຕົ້ນໄມ້ ວັນທີ 01/06/2020 ປີ 10 ທີ່ ເມືອງບໍລະພາ, ແຂວງ ຄຳມ່ວນ	28,186,000
2	ສະໜັບສະໜູນ ໜ້າກາກອະນາໄມ ໃຫ້ໂຮງໝໍ 103 ແລະ 150 ຕຽງ	17,000,000
3	ສະໜັບສະໜູນນ້ຳມັນ ໜ່ວຍກູ້ໄພມູນນິທິຊ່ວຍເຫຼືອຄົນທຸກຍາກ ແຫ່ງ ສປປ ລາວ 1623 ແລະ ອົງການກາແດງ	40,115,960
4	ອຸປະຖຳເຄື່ອງ ແລະ ຊ່ວຍເຫລືອສູນຄົນພິການຕາບອດ, ຫູໜວກ ແລະ ສູນເສຍ ອົງຄະພິເສດ 790 (195ຄຄ)	73,393,000
5	ສະໜັບສະໜູນກອງປະໃຫຍ່ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວຄັ້ງທີ VIII	36,472,000
7	ອຸປະຖຳຜ້າຫົ່ມຊ່ວຍເຫຼືອນ້ຳຖ້ວມ ຢູ່ ແຂວງ ສະຫວັນນະເຂດ	25,000,000
8	ຊຸກຍູ້ ກອງປະຊຸມສະມາຊິກສະພາແຫ່ງຊາດ ຄັ້ງທີ VII	25,000,000
9	ສະໜູນສະໜູນ ງານສະຫວັນສຸກສັນຫັນສາ ປະຈຳປີ 2020	50,000,000
10	ອຸປະຖຳ ເຄື່ອງມືການແພດໃຫ້ຫ້ອງວ່າການກະຊວງປ້ອງກັນປະເທດ	10,000,000
11	ສະໜັບສະໜູນ ການບູລະນະ ແລະ ສ້ອມແປງ ວົງວຽນດອນໜູນ	78,010,262
12	ການຊ່ວຍເຫຼືອ ອື່ນໆ	12,912,820
	ຈຳນວນລວມ	**396,090,042**

12. ການມອບພັນທະອາກອນ ແລະ ອື່ນໆ ເຂົ້າລັດ ປະຈຳປີ 2020

ລ/ດ	ລາຍການ	2019	2020	ສ່ວນຕ່າງ 2019-2020	
		ຫົວໜ່ວຍ ເປັນ ກີບ	ຫົວໜ່ວຍ ເປັນ ກີບ	ເປັນ ກີບ	ເປັນ %
1	ພາສີນຳເຂົ້າ	43,299,752,000	30,770,033,800	12,529,718,200	28.94
2	ອາກອນຊົມໃຊ້	174,210,011,500	104,651,811,900	69,558,199,600	39.93
3	ອາກອນມູນຄ່າເພີ່ມ	162,358,934,899	56,457,764,899	105,901,170,000	65.23
4	ຄ່າບູລະນະທາງ	88,338,640,000	76,018,280,000	12,320,360,000	13.95
5	ຄັງແຮ	80,734,800,000	195,899,410,000	-115,164,610,000	-58.79
6	E-Meter	1,019,292,000	877,134,000	142,158,000	13.95
7	ກວດກາຄຸນນະພາບ	2,717,812,000	2,339,024,000	378,788,000	13.94
8	ອມພ ເພີ່ມພາຍໃນປີ	15,826,873,767	61,466,531,998	-45,639,658,231	-74.25
9	ອາກອນກຳໄລ	800,000,000	2,870,718,065	-2,070,718,065	-72.13
10	ອາກອນເງິນເດືອນ	1,251,753,473	880,770,879	370,982,594	29.637
ລວມ/Total		**570,557,869,639**	**532,231,479,541**	**38,326,390,098**	**6.72**

13. ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2020

ສຳລັບ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2020 ແມ່ນໄດ້ຄັດຕິດເປັນເອກະສານຊ້ອນທ້າຍຂອງ ບົດລາຍງານປະຈຳປີ ສະບັບນີ້.

14. ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021

ໃນປີ 2021 ຈະເປັນປີທີ່ມີຄວາມທ້າທາຍຄັ້ງໃຫຍ່ ສຳລັບບໍລິສັດ ເນື່ອງຈາກພວກເຮົາຈະຕ້ອງໄດ້ປັບປຸງລະບົບ ການບໍລິຫານຈັດການ ຈາກການດຳເນີນທຸລະກິດທີ່ຂາດທຶນສະສົມໃນປີ 2020 ແລະ ຈຳເປັນຕ້ອງໄດ້ມີການຊົດເຊີຍ ຈຳນວນຍອດຂາຍທີ່ຫາຍໄປຈາກລູກຄ້າໂຄງການທີ່ການກໍ່ສ້າງໄດ້ສຳເລັດໄປແລ້ວ. ດັ່ງນັ້ນ, ບໍລິສັດຈຶ່ງຕັດສິນໃຈນຳໃຊ້

ຍຸດທະສາດທາງການຕະຫຼາດເຊິ່ງລຸກ ແລະ ມີຄວາມເໝາະສົມຫຼາຍຂຶ້ນ ລວມທັງຍຸດທະສາດທາງການຕະຫຼາດພາຍໃນ ປະເທດອີກດ້ວຍ.

1) ການຂະຫຍາຍຕົວ - ຊຶດເຊີຍຄວາມເສຍຫາຍໃນປີ 2020

I. ໂຄງການ B2B

- ເພີ່ມປະລິມານການສະໜອງນ້ຳມັນໃຫ້ຫຼາຍຂຶ້ນ ໂດຍໃຊ້ປະໂຫຍດຈາກຄວາມໄດ້ປຽບດ້ານອຸປະທານ ແລະ ໂລຈິສຕິກຂອງບໍລິສັດ (ທຽບກັບຜູ້ນຳເຂົ້າລາຍອື່ນ) ພ້ອມກັບການປະຕິບັດຕາມກົດລະບຽບຂອງ ລັດຖະບານ;
- ເພີ່ມຖານລູກຄ້າໃນຮູບແບບ B2B ໃຫ້ຫຼາຍຂຶ້ນ (ໂດຍສະເພາະແມ່ນ ກຸ່ມລູກຄ້າຂຸດຄົ້ນບໍ່ແຮ່ ແລະ ຂາຍ ສົ່ງ);
- ໃຊ້ປະໂຫຍດຈາກການຊື້ນ້ຳມັນດ້ວຍລາຄາອ້າງອີງໃນປະຈຸບັນ ແລະ ລາຄາທີ່ຫຼາກຫຼາຍໃຫ້ໄດ້ປະມານ 45 ລ້ານລິດ.

II. ການຂາຍຍ່ອຍ

- ເພີ່ມປະລິມານການສະໜອງນ້ຳມັນໃຫ້ກັບລູກຄ້າປະຈຸບັນໃຫ້ຫຼາຍຂຶ້ນ ແລະ ລູກຄ້າ COCO ລາຍໃໝ່ ທີ່ຫາມາໄດ້.
- ປັບປຸງພາບລັກ ແລະ ເພີ່ມມູນຄ່າໃຫ້ກັບທຸລະກິດນ້ຳມັນ ແລະ ທຸລະກິດຮ້ານສະດວກຊື້ໃນປ້ຳນ້ຳມັນ ເພື່ອໃຫ້ມີກຳໄລ ແລະ ປະລິມານການຂາຍເພີ່ມຂຶ້ນ:
  - ສິ່ງເສີມໃຫ້ລູກຄ້ານຳໃຊ້ການເຕີມນ້ຳມັນດ້ວຍບັດ (ບັດ PlusCard)
  - ຜັດທະນາລະບົບການຈຳໜ່າຍນ້ຳມັນເຄື່ອງໃຫ້ໄດ້ (10)
  - ຜັດທະນາຮ້ານກາເຟ (5)

III. ການຕະຫຼາດ ແລະ ການສົ່ງເສີມການຂາຍ

- ເພີ່ມກຳໄລໃຫ້ຫຼາຍຂຶ້ນ ໂດຍການຫຼຸດຕົ້ນທຶນ.
- ສືບຕໍ່ຕິດຕາມ ແລະ ຮ່ວມມືກັບບັນດາບໍລິສັດອຸດສາຫະກຳ ເພື່ອຮັກສາສ່ວນແບ່ງທາງການຕະຫຼາດ/ຫຼຸດ ຄ່າໃຊ້ຈ່າຍດ້ານຕົ້ນທຶນ, ປະກັນໄພ ແລະ ການຂົນສົ່ງສິນຄ້າ.

2) ປະສິດທິພາບທາງດ້ານການດຳເນີນງານ

i) ສືບຕໍ່ ບໍລິຫານຈັດການຄ່າໃຊ້ຈ່າຍດ້ານການດຳເນີນງານ ແລະ ຄ່າໃຊ້ຈ່າຍດ້ານການລົງທຶນໃຫ້ມີ ປະສິດທິພາບ ໂດຍການດັດປັບໂຄງສ້າງ ແລະ ການລົງທຶນຂອງບໍລິສັດ ໃຫ້ໄດ້ຜົນຕອບແທນໄວ້ທີ່ສຸດ.

ii) ປັບປຸງປະສິດທິພາບໃນການດຳເນີນງານຄືນໃໝ່, ຂະຫຍາຍສາງນ້ຳມັນໃຫ້ສາມາດບັນຈຸປະລິມານນ້ຳມັນ ໄດ້ຫຼາຍຂຶ້ນ ແລະ ນຳໃຊ້ໃຫ້ເກີດປະໂຫຍດສູງສຸດ ເພື່ອຫຼຸດຜ່ອນການລົງທຶນໃນການຂະຫຍາຍສາງ ນ້ຳມັນ.

3) ນະໂຍບາຍທາງດ້ານການເງິນ

i) ຫຼຸດອັດຕາສ່ວນລູກໜີ້ການຄ້າຂອງບໍລິສັດໃນປີ 2020 ໃຫ້ເຫຼືອ 0

ii) ຫຼຸດຜ່ອນຄວາມສ່ຽງສິນເຊື່ອເບີກເກີນບັນຊີຂອງບໍລິສັດ ກັບບັນດາຜູ້ສະໜອງ.

iii) ບໍລິຫານ ຄວາມສ່ຽງດ້ານສິນເຊື່ອຂອງລາຄານ້ຳມັນອ້າງອີງໃນປະຈຸບັນ.

iv) ຫຼຸດຄວາມສ່ຽງ ການຂາດທຶນຈາກອັດຕາແລກປ່ຽນ ໃຫ້ເຫຼືອ 0.

4) ວັດທະນະທຳອົງກອນ

i) ສົ່ງເສີມ ພະນັກງານທີ່ມີປະສິດທິພາບສູງ ໄປສູ່ບົດບາດໜ້າວຽກທີ່ທ້າທາຍຍິ່ງຂຶ້ນ.

ii) ພັດທະນາຂີດຄວາມສາມາດຂອງພະນັກງານ - ສົ່ງເສີມການກ້າວຂ້າມໄປສູ່ການປ່ຽນແປງ ແລະ ຝຶກອົບຮົມໜ້າວຽກໃນສາຍງານອື່ນ.

iii) ຊຸກຍູ້ ໃຫ້ມີການຄິດຄົ້ນນະວັດຕະກຳໃໝ່ໆ.

5) ແຜນຍອດຂາຍໃນປີ 2021

i) ລູກຄ້າໂຄງການ/B2B

ລູກຄ້າ/Costomer	ແຜນ ປີ 2021 (ລິດ)
B2B	**114,140,000**

ii) ລູກຄ້າປ້ຳນ້ຳມັນ

ລ/ດ	ລູກຄ້າ/Costomer	ແຜນ ປີ 2021 (ລິດ)
1	ປ້ຳນ້ຳມັນ ພລາຕິນຳ/Platinum	12,882,000
2	ປ້ຳນ້ຳມັນ ໂກລ/Gold	26,300,000
3	ປ້ຳນ້ຳມັນ ມາດຕະຖານ/Standard	24,291,000
4	ປ້ຳນ້ຳມັນ ທ້ອງຖິ່ນພັດທະນາ/Thongthin	10,972,000
	ລວມ/Total	**74,445,000**

ນອກຈາກຂະຫຍາຍຍອດຂາຍນ້ຳມັນແລ້ວ ຍັງມີການຂະຫຍາຍປ້ຳນ້ຳມັນ ເພີ່ມອີກ 9 ປ້ຳ ຄືດັ່ງນີ້:

- ປ້ຳນ້ຳມັນ ໂກລ/Gold ຈຳນວນ 4 ປ້ຳ; ແລະ
- ປ້ຳນ້ຳມັນ ມາດຕະຖານ/Standard ຈຳນວນ 5 ປ້ຳ.

iii) ລູກຄ້ານ້ຳມັນເຕົ້າ, ຢາງໝາກຕອຍ ແລະ ນ້ຳມັນເຄື່ອງ

ລ/ດ	ລູກຄ້າ/Costomer	ແຜນ ປີ 2021 (ລິດ)
1	ນ້ຳມັນເຕົ້າ	ຕາມການສັ່ງຊື້ຂອງ ລູກຄ້າ
2	ຢາງໝາກຕອຍ	ຕາມການສັ່ງຊື້ຂອງ ລູກຄ້າ
3	ນ້ຳມັນເຄື່ອງ	46,000
ລວມ/Total		**46,000**

ປະທານສະພາບໍລິຫານ

ທ່ານ ຈັນທອນ ສິດທິໄຊ